ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 283 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 06 MAR 2012

# ຂໍ້ຕົກລົງ

## ວ່າດ້ວຍການປະກອບ ແລະອັດຕາ ຄ່າໂທລະສັບໃຫ້ພະນັກງານ ທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;
- ອີງຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງມູນຄ່າດັດສະນີເງິນເດືອນພື້ນຖານ, ເງິນອຸດໜູນ ແລະເງິນເບ້ຍລ້ຽງທີ່ນຳໃຊ້ງົບປະມານແຫ່ງລັດ ສະບັບເລກທີ 88/ນຍ ລົງວັນທີ 11/09/2008;
- ອີງຕາມແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 540/ຫລບ.ກລຂ ລົງວັນທີ 27/2/2012.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ :

<u>ມາດຕາ 1</u>: ປະກອບໂທລະສັບຕັ້ງໂຕະປະຈຳເຮືອນ ແລະເລກໝາຍໃຫ້ຄະນະຜູ້ວ່າການ, ຄະນະພັກ, ຜູ້ຊ່ວຍວຽກຄະນະຜູ້ວ່າການ, ຄະນະກົມແລະທຽບເທົ່າໃນມູນຄ່າບໍ່ເກີນ 300.000 ກີບ/ໜ່ວຍ ແລະມູນຄ່າການຕິດຕັ້ງຕົວຈິງ. ການປະກອບໂທລະສັບໃຫ້ແຕ່ລະຕຳແໜ່ງງານນັ້ນແມ່ນຈະຕິດຕັ້ງໃຫ້ເທື່ອດຽວ, ຖ້າມີຢູ່ແລ້ວຈະບໍ່ປະກອບໃຫ້ຕື່ມອີກ ແລະຫາກເປ່ເພແມ່ນໃຫ້ກຸ້ມຕົນເອງ.

<u>ມາດຕາ 2</u>: ປະຕິບັດນະໂຍບາຍເປັນເງິນປະກອບໂທລະສັບມືຖື ໃຫ້ພະນັກງານ 3 ປີ/ຄົນ/ໜ່ວຍ ຕາມຕຳແໜ່ງງານ ໂດຍບໍ່ມີການຫັກຫຼຸ້ຍຫ້ຽນ ດັ່ງນີ້:

| | |
|---|---|
| 1. ເລຂາຄະນະພັກ, ຜູ້ວ່າການ ທຫລ | 5.000.000 ກີບ/ຄົນ/ໜ່ວຍ; |
| 2. ຮອງເລຂາຄະນະພັກ, ຮອງຜູ້ວ່າການ ທຫລ | 4.500.000 ກີບ/ຄົນ/ໜ່ວຍ; |
| 3. ຄະນະປະຈຳພັກ, ຜູ້ຊ່ວຍວຽກຄະນະຜູ້ວ່າການ | 4.000.000 ກີບ/ຄົນ/ໜ່ວຍ; |
| 4. ຄະນະພັກ ທຫລ | 3.500.000 ກີບ/ຄົນ/ໜ່ວຍ; |
| 5. ຫົວໜ້າກົມ ແລະທຽບເທົ່າ, ຮອງປະທານກວດກາພັກ, ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກເອກະລາດ, ປະທານ ແລະເລຂາຄະນະບໍລິຫານງານ 3 ອົງການຈັດຕັ້ງມະຫາຊົນ ທຫລ | 3.000.000 ກີບ/ຄົນ/ໜ່ວຍ; |

6. ຮອງຫົວໜ້າກົມ ແລະທຽບເທົ່າ, ຮອງເລຂາຄະນະພັກ ຮາກຖານ, ຮອງເລຂາໜ່ວຍພັກເອກະລາດ, ຮອງປະທານ, ຮອງເລຂາຄະນະບໍລິຫານງານ 3 ອົງການຈັດຕັ້ງ ມະຫາຊົນ ທຫລ, ປະທານ ແລະເລຂາຄະນະບໍລິຫານງານ 3 ອົງການຈັດຕັ້ງມະຫາຊົນຮາກຖານ ທຫລ, ເລຂາຜູ້ວ່າການ 2.500.000 ກີບ/ຄົນ/ໜ່ວຍ;
7. ຫົວໜ້າພະແນກ ແລະທຽບເທົ່າ, ກຳມະການຄະນະພັກຮາກຖານ, ກຳມະການຄະນະໜ່ວຍພັກເອກະລາດ, ຄະນະບໍລິຫານງານ 3 ອົງການຈັດຕັ້ງມະຫາຊົນ ທຫລ, ຮອງປະທານ ແລະຮອງເລຂາ ຄະນະບໍລິຫານງານ 3 ອົງການຈັດຕັ້ງມະຫາຊົນຮາກຖານ ທຫລ, ເລຂາຮອງຜູ້ວ່າການ 2.000.000 ກີບ/ຄົນ/ໜ່ວຍ;
8. ຮອງຫົວໜ້າພະແນກ ແລະທຽບເທົ່າ, ຄະນະບໍລິຫານງານ 3 ອົງການຈັດຕັ້ງມະຫາຊົນຮາກຖານ ທຫລ, ພະນັກງານຂັບລົດ ຄະນະຜູ້ວ່າການ ແລະໃກ້ຊິດການນຳ 1.500.000 ກີບ/ຄົນ/ໜ່ວຍ.

ສຳລັບຜູ້ທີ່ໄດ້ຮັບການແຕ່ງຕັ້ງໃຫ້ຮັບຜິດຊອບຄວບຫຼາຍຕຳແໜ່ງແມ່ນໃຫ້ປະຕິບັດຕາມອັດຕາດຽວທີ່ສູງສຸດ. ໃນກໍລະນີມີການປ່ຽນແປງຕຳແໜ່ງງານໃນຊ່ວງໄລຍະເວລາດັ່ງກ່າວແມ່ນຈະໄດ້ຮັບສ່ວນຜິດດ່ຽງຄືນ.

<u>ມາດຕາ 3 :</u> ປະຕິບັດອັດຕາຄ່າໂທປະຈຳເດືອນໃຫ້ແຕ່ລະຕຳແໜ່ງງານ ດັ່ງນີ້ :

1. ເລຂາຄະນະພັກ, ຜູ້ວ່າການ ທຫລ 800.000 ກີບ/ຄົນ/ເດືອນ;
2. ຮອງເລຂາຄະນະພັກ, ຮອງຜູ້ວ່າການ ທຫລ 700.000 ກີບ/ຄົນ/ເດືອນ;
3. ຄະນະປະຈຳພັກ, ຜູ້ຊ່ວຍວຽກຄະນະຜູ້ວ່າການ 600.000 ກີບ/ຄົນ/ເດືອນ;
4. ຄະນະພັກ ທຫລ 500.000 ກີບ/ຄົນ/ເດືອນ;
5. ຫົວໜ້າກົມ ແລະທຽບເທົ່າ, ຮອງປະທານກວດກາພັກ, ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກເອກະລາດ, ປະທານ ແລະເລຂາຄະນະບໍລິຫານງານ 3 ອົງການຈັດຕັ້ງມະຫາຊົນ ທຫລ 400.000 ກີບ/ຄົນ/ເດືອນ;
6. ຮອງຫົວໜ້າກົມ ແລະທຽບເທົ່າ, ຮອງເລຂາຄະນະພັກຮາກຖານ, ຮອງເລຂາໜ່ວຍພັກເອກະລາດ, ຮອງປະທານ ແລະຮອງເລຂາຄະນະບໍລິຫານງານ 3 ອົງການຈັດຕັ້ງມະຫາຊົນ ທຫລ, ປະທານ ແລະເລຂາຄະນະບໍລິຫານງານ3 ອົງການຈັດຕັ້ງມະຫາຊົນຮາກຖານ ທຫລ, ເລຂາຜູ້ວ່າການ 350.000 ກີບ/ຄົນ/ເດືອນ;

7. ຫົວໜ້າພະແນກ ແລະທຽບເທົ່າ, ກຳມະການຄະນະພັກຮາກຖານ, ກຳມະການຄະນະໜ່ວຍພັກເອກະລາດ, ຄະນະບໍລິຫານງານ 3 ອົງການຈັດຕັ້ງມະຫາຊົນ ທຫລ, ຮອງປະທານ ແລະຮອງເລຂາຄະນະບໍລິຫານງານ 3 ອົງການຈັດຕັ້ງມະຫາຊົນ ຮາກຖານ ທຫລ, ເລຂາຮອງຜູ້ວ່າການ 300.000 ກີບ/ຄົນ/ເດືອນ;
8. ຮອງຫົວໜ້າພະແນກ ແລະທຽບເທົ່າ, ຄະນະບໍລິຫານງານ 3 ອົງການຈັດຕັ້ງມະຫາຊົນຮາກຖານ, ພະນັກງານຂັບລົດ ແລະໃກ້ຊິດການນຳ 250.000 ກີບ/ຄົນ/ເດືອນ;
9. ຫົວໜ້າຂະແໜງ 200.000 ກີບ/ຄົນ/ເດືອນ;
10. ຮອງຫົວໜ້າຂະແໜງ 180.000 ກີບ/ຄົນ/ເດືອນ;
11. ພະນັກງານສົມບູນ 150.000 ກີບ/ຄົນ/ເດືອນ.

ສຳລັບຜູ້ທີ່ໄດ້ຮັບການແຕ່ງຕັ້ງໃຫ້ຮັບຜິດຊອບຄວບຫຼາຍຕຳແໜ່ງແມ່ນໃຫ້ປະຕິບັດຕາມອັດຕາດຽວທີ່ສູງສຸດ.

<u>ມາດຕາ 4:</u> ພະນັກງານທີ່ຮັບຜິດຊອບກະກຽມກອງປະຊຸມ, ສຳມະນາ ແລະຝຶກອົບຮົມຕາມການແຕ່ງຕັ້ງຈາກຜູ້ວ່າການ ທຫລ ແມ່ນຈະໄດ້ຮັບມູນຄ່າໂທເພີ່ມ ດັ່ງນີ້:

1. ແຕ່ 3-5 ວັນ 70.000 ກີບ/ຄົນ/ຄັ້ງ;
2. ແຕ່ 6-10 ວັນ 100.000 ກີບ/ຄົນ/ຄັ້ງ;
3. ແຕ່ 11 ວັນຂຶ້ນໄປ 150.000 ກີບ/ຄົນ/ຄັ້ງ.

<u>ມາດຕາ 5:</u> ຄະນະສະເພາະກິດ ທີ່ໄດ້ຮັບການແຕ່ງຕັ້ງຈາກຜູ້ວ່າການ ທຫລ ແມ່ນຈະໄດ້ຮັບມູນຄ່າໂທເພີ່ມ 30.000 ກີບ/ຄົນ/ວັນ.

- ຖ້າມີກຳນົດເກີນ 1 ເດືອນຂຶ້ນໄປ ຈະໄດ້ຄິດໄລ່ຕາມໄລຍະດັ່ງນີ້:

1. ແຕ່ 1-3 ເດືອນ ຄິດໄລ່ເທົ່າກັບ 1 ເດືອນ;
2. ແຕ່ 4-6 ເດືອນ ຄິດໄລ່ເທົ່າກັບ 2 ເດືອນ;
3. ແຕ່ 7 ເດືອນຂຶ້ນໄປ ຄິດໄລ່ເທົ່າກັບ 3 ເດືອນ.

<u>ມາດຕາ 6:</u> ຫ້ອງການ, ກົມຈັດຕັ້ງແລະພະນັກງານ, ບັນດາກົມແລະທຽບເທົ່າ ແລະພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

<u>ມາດຕາ 7:</u> ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ ເດືອນ 3/2012 ເປັນຕົ້ນໄປ. ທຸກນິຕິກຳທີ່ນຳໃຊ້ໃນເມື່ອກ່ອນ ຊຶ່ງຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

ສົມພາວ ໄພສິດ